ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະຄອນຫຼວງວຽງຈັນ

ພະແນກກະສິກຳ ແລະ ປ່າໄມ້

ເລກທີ 5065 /ກປ.ນວ

ວັນທີ 09 NOV 2021

# ແຈ້ງການ

**ເຖິງ:** ຫົວໜ້າ ຂະແໜງລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກຳ ແລະ ປ່າໄມ້ 9 ຕົວ ເມືອງ; ຜູ້ປະກອບການດຳເນີນທຸລະກິດ ດ້ານການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ.

**ເລື່ອງ:** ການເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດ ກ່ຽວກັບວຽກງານການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ), ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການປະມົງ, ສະບັບເລກທີ 03/ສພຊ, ລົງວັນທີ 09 ກໍລະກົດ 2009;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ, ໝວດທີ 4 ມາດຕາ 21 ແລະ ມາດຕາ 22.

ການຈັດຕັ້ງປະຕິບັດເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນໄລຍະຜ່ານມາແມ່ນຍັງໄດ້ປະຕິບັດຕາມລັດຖະບັນຍັດຂອງ ປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ (ສະບັບປັບປຸງ) ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ແຕ່ເພື່ອເຮັດໃຫ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດມີຄວາມສົມດູນເປັນປົກກະຕິ, ຂະຫຍາຍຕົວ ແລະ ມີລະບຽບວິໄນ ພ້ອມທັງມອບເງິນຄ່າບໍລິການ ແລະ ຄ່າທຳນຽມເຂົ້າງົບປະມານຂອງລັດ ໃຫ້ຖືກຕ້ອງຕາມລະບຽບການເງິນວາງອອກນັ້ນ ໃຫ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບໃໝ່ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ໃນໝວດທີ 4 ມາດຕາ 21 ແລະ ມາດຕາ 22 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ຂະແໜງກະສິກຳ ແລະ ປ່າໄມ້ ໂດຍສະເພາະຂົງເຂດວຽກງານລ້ຽງສັດ ແລະ ການປະມົງ ໃນນະຄອນຫຼວງວຽງຈັນ ເຊິ່ງຈະໄດ້ເລີ່ມຈັດຕັ້ງການເກັບຄ່າທຳນຽມ ແລະ ຄ່າບໍລິການ ຊຶ່ງມີເນື້ອໃນລະອຽດ ດັ່ງນີ້:

1. ໃຫ້ຈັດຕັ້ງປະຕິບັດ ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ລະບຸໄວ້ໃນ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021, ໝວດທີ 4 ມາດຕາ 21 ຂໍ້ II ແລະ ມາດຕາ 22 ຂໍ້ທີ II ຂອງວຽກງານການລ້ຽງສັດ ແລະ ການປະມົງ ໃຫ້ເກັບດັ່ງນີ້:



Scanned with CamScanner

1.1. ຄ່າທຳນຽມ.

ກ. ໃບອະນຸຍາດດຳເນີນທຸລະກິດລ້ຽງສັດ ແລະ ການປະມົງ

1) ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ 50.000 ກີບຕໍ່ໃບ;

2) ໃບຢັ້ງຢືນການກວດກາສັດຢູ່ດ່ານສັດຕະວະແພດ 35.000 ກີບຕໍ່ໃບ;

3) ໃບຢັ້ງຢືນການກັກກັນສັດ 35.000 ກີບຕໍ່ຄັ້ງ.

ຂ. ໃບທຳນຽມຂຶ້ນທະບຽນພິມສັດ

1) ປຶ້ມທະບຽນພິມຊ້າງ 50.000 ກີບຕໍ່ ຫົວ ຫຼື ໃບ;

2) ປຶ້ມທະບຽນພິມ ມ້າ, ລໍ, ລາ, ງົວ, ຄວາຍ 15.000 ກີບຕໍ່ ຫົວ ຫຼື ໃບ;

3) ປຶ້ມທະບຽນພິມ ໝູ, ແບ້, ແກະ 10.000 ກີບຕໍ່ ຫົວ ຫຼື ໃບ;

4) ປຶ້ມທະບຽນພິມ ສັດເປັນກຸ່ມ 35.000 ກີບຕໍ່ ຫົວ ຫຼື ໃບ;

5) ໃບຂຶ້ນທະບຽນແນວພັນສັດ, ໃບຂຶ້ນ ຫຼື ຈົດທະບຽນສູດອາຫານສັດ ຫຼື ຢາສັດຕະວະແພດ, ໃບທະບຽນຟາມລ້ຽງສັດ ແລະ ສັດນ້ຳ 50.000 ກີບຕໍ່ແນວພັນ.

1.2. ຄ່າບໍລິການ

ກ. ຄ່າບໍລິການກວດກາຊີ້ນ ຢູ່ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ

1) ກວດກາຊີ້ນ ງົວ, ຄວາຍ, ມ້າ 35.000 ກີບຕໍ່ໂຕ;

2) ກວດກາຊີ້ນ ໝູ, ແກະ, ແບ້ 15.000 ກີບຕໍ່ໂຕ;

3) ກວດກາຊີ້ນສັດປີກ 15.000 ກີບຕໍ່ 100 ໂຕ.

ຂ. ການວິໄຈຜະລິດຕະພັນສັດ

1) ກວດກາຫາສານຟໍມາລີນໃນຜະລິດຕະພັນສັດ ຫຼື ສັດນ້ຳ 30.000 ກີບຕໍ່ຕົວຢ່າງ;

2) ກວດກາວິໄຈຫາຢາຕ້ານເຊື້ອຕົກຄ້າງໃນຜະລິດຕະພັນສັດ ຫຼື ສັດນ້ຳ 100.000 ກີບຕໍ່ຕົວຢ່າງ.

ຄ. ການວິໄຈອາຫານສັດ

1) ວິໄຈຄວາມເປັນກົດ, ເປັນດ່າງ 20.000 ກີບຕໍ່ຕົວຢ່າງ;

2) ວິໄຈຢາຕ້ານເຊື້ອຕົກຄ້າງ ແບບດ່ວນ 45.000 ກີບຕໍ່ຕົວຢ່າງ;

3) ການວິໄຈຫາຢາຕ້ານເຊື້ອຕົກຄ້າງ ດ້ວຍວິທີ ELISA 70.000 ກີບຕໍ່ຕົວຢ່າງ.

ງ. ຄ່າບໍລິການກວດກາວິໄຈນ້ຳ ສຳລັບລ້ຽງປາ ແລະ ສັດນ້ຳ

1) ການວິໄຈຫາໄຂນ້ຳຂອງໜອງປາ, ຄວາມຂຸ່ນຂອງນ້ຳ, ຄວາມເປັນກົດເປັນດ່າງຂອງນ້ຳຂອງໜອງປາ 35.000 ກີບຕໍ່ຕົວຢ່າງ;

2) ກວດກາວິໄຈຊອກຫາລະດັບອົກຊີແຊນ, ຄວາມກະດ້າງຂອງນ້ຳ, ຄວາມເປັນກົດເປັນດ່າງຂອງໜອງປາ 50.000 ກີບຕໍ່ຕົວຢ່າງ;

3) ກວດກາວິໄຈຊອກຫາລະດັບແອມໂມເນຍໃນນ້ຳ, ປະລິມານໄນເຕຣດ, ໄນເຕຣທ ໃນນ້ຳຂອງໜອງປາ 100.000 ກີບຕໍ່ຕົວຢ່າງ.

ຈ. ການກວດກາເພື່ອຢັ້ງຢືນສຸຂະພາບສັດ, ສັດນ້ຳ ແລະ ມາດຕະຖານຟາມລ້ຽງສັດ, ການສັດຕະວະແພດ



Scanned with CamScanner

ແລະ ການປະມົງ

1) ປະເມີນຄວາມສ່ຽງ ແລະ ອອກອະນຸຍາດ ການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ 50.000 ກີບຕໍ່ຄັ້ງ;

2) ກວດກາຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດຢູ່ສະຖານທີ່ກັກກັນ, ບ່ອນນຳສົ່ງສິນຄ້າຂຶ້ນ-ລົງພາຫະນະ 100.000 ກີບຕໍ່ຄັ້ງ;

3) ກວດກາ ແລະ ຢັ້ງຢືນສຸຂະພາບຊ້າງ 200.000 ກີບຕໍ່ໂຕ;

4) ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບ ງົວ, ຄວາຍ, ມ້າ, ລໍ, ລາ 50.000 ກີບຕໍ່ໂຕ;

5) ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບ ໝູ, ແກະ, ແບ້ 10.000 ກີບຕໍ່ໂຕ;

6) ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບສັດປີກ ສະເພາະເປັນໂຕ 15.000 ກີບຕໍ່ 100 ໂຕ;

7) ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບສັດປີກ ໜ້ອຍກວ່າ 1.000 ໂຕ 10.000 ກີບຕໍ່ຖ້ຽວ;

8) ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບສັດປີກ ຫຼາຍກວ່າ 1.000 ໂຕ, ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບ ໝາ, ແມວ, ປາເອ້ສາຍພັນພື້ນເມືອງ ແລະ ສັດອື່ນ 35.000 ກີບຕໍ່ຖ້ຽວ;

9) ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບປາເອ້ ສາຍພັນພື້ນເມືອງ 35.000 ກີບຕໍ່ໂຕ;

10) ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບປາເອ້ ສາຍພັນຕ່າງປະເທດ 5.000 ກີບຕໍ່ໂຕ;

11) ກວດກາ ແລະ ອອກໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດ ແລະ ສັດນ້ຳ, ມາດຖານທີ່ດີສຳລັບການລ້ຽງສັດ, ສັດຕະວະແພດ, ການປະມົງ ແລະ ການປຸງແຕ່ງ ຜະລິດຕະພັນສັດ ແລະ ສັດນ້ຳ 50.000 ກີບຕໍ່ຄັ້ງ;

12) ລົງກວດກາກິດຈະການລ້ຽງສັດ, ສັດຕະວະແພດ ແລະ ການປະມົງ ທີ່ເປັນທຸລະກິດ ເພື່ອປະກອບການຢັ້ງຢືນມາດຕະຖານເຕັກນິກດ້ານການຜະລິດ ແລະ ການບໍລິການ 100.000 ກີບຕໍ່ຄັ້ງ;

13) ກວດກາເນື້ອໃນເພື່ອສ້າງສື່ ແລະ ສິ່ງພິມ ເພື່ອຈຳໜ່າຍ ຫຼື ເພື່ອການໂຄສະນາກ່ຽວກັບການລ້ຽງສັດ, ສັດຕະວະແພດ ຫຼື ປະມົງ, ກວດກາເນື້ອໃນຮັບຮອງຫຼັກສູດໂຮງຮຽນວິຊາຊີບ 50.000 ກີບຕໍ່ຄັ້ງ.

ສ. ການກັກກັນ, ຕິດຕາມສຸຂະພາບສັດ ເພື່ອກວດກາ ແລະ ອອກໃບຢັ້ງຢືນສຸຂະພາບສັດ ສຳລັບນຳເຂົ້າ

1) ໃບຢັ້ງຢືນກັກກັນ ແລະ ກວດກາສຸຂະພາບຊ້າງ 150.000 ກີບຕໍ່ໂຕ.

ຊ. ການກັກກັນ, ຕິດຕາມສຸຂະພາບສັດ ເພື່ອກວດກາ ແລະ ອອກໃບຢັ້ງຢືນສຸຂະພາບສັດ ສຳລັບສົ່ງອອກ

1) ໃບຢັ້ງຢືນກັກກັນ ແລະ ກວດກາສຸຂະພາບຊ້າງ 500.000 ກີບຕໍ່ໂຕ.

ຍ. ການສີດຢາຂ້າເຊື້ອ ໃສ່ຍານພະຫະນະ

1) ລົດຮັບໃຊ້ທົ່ວໄປ (ໃນກໍລະນີເກີດພະຍາດລະບາດ) 5.000 ກີບຕໍ່ຄັນ;

2) ລົດບັນທຸກສິນຄ້າ (ສັດ) 4 ລໍ້ 35.000 ກີບຕໍ່ຄັນ;

3) ລົດບັນທຸກສິນຄ້າ (ສັດ) 6 ລໍ້ຂຶ້ນໄປ 50.000 ກີບຕໍ່ຄັນ.

ຈ. ຄ່າແຮງສັກຢາກັນພະຍາດ

1) ສັກຢາກັນພະຍາດສັດໃຫຍ່ 5.000 ກີບຕໍ່ໂຕ;



Scanned with CamScanner

2) ສັກຢາກັນພະຍາດສັດນ້ອຍ 20.000 ກີບຕໍ່ 10 ໂຕ;

3) ສັກຢາກັນພະຍາດສັດປີກ 7.000 ກີບຕໍ່ 10 ໂຕ.

2. ມອບໃຫ້ຂະແໜງລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກຳ ແລະ ປ່າໄມ້ປະຈຳເມືອງ ແລະ ຫ້ອງການບໍລິຫານ ແລະ ຈັດຕັ້ງ ຂອງພະແນກກະສິກຳ ແລະ ປ່າໄມ້ ຈັດຕັ້ງເຜີຍແຜ່ໃຫ້ຜູ້ປະກອບການດຳເນີນທຸລະກິດດ້ານ ການລ້ຽງສັດ, ການສັດຕະວະແພດ ແລະ ການປະມົງ ຮັບຮູ້ເຂົ້າໃຈ ແລະ ພ້ອມ ກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

3. ມອບໃຫ້ຂະແໜງລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຊີ້ນຳໜ່ວຍງານລ້ຽງສັດ ແລະ ການປະມົງ, ວິຊາການສັດຕະວະແພດ ປະຈຳໂຮງຂ້າສັດ-ບ່ອນຂ້າສັດຍ່ອຍ, ຟາມລ້ຽງສັດ, ຈຸດບ່ອນບໍລິການເອກະສານ, ດ່ານນຳເຂົ້າ-ສົ່ງອອກ, ສົ່ງຜ່ານ ໃຫ້ຈັດຕັ້ງປະຕິບັດການເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມບຽບທີ່ວາງອອກຢ່າງເຂັ້ມງວດ ແລ້ວມອບເຂົ້າງົບປະມານຂອງລັດຕາມລະບຽບການ;

4. ຖ້າພົບເຫັນຜູ້ລະເມີດ ແລະ ຜູ້ປະກອບການບໍ່ໃຫ້ການຮ່ວມມື ໃຫ້ພາກສ່ວນທີ່ກ່ຽວຂ້ອງຕັກເຕືອນສຶກສາອົບຮົມ ຕາມຂັ້ນຕອນຂອງລະບຽບກົດໝາຍ.

5. ມອບໃຫ້ຂະແໜງລ້ຽງສັດ ແລະ ການປະມົງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດແຈ້ງການສະບັບນີ້ໃຫ້ມີປະສິດທິຜົນສູງ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

**ຫົວໜ້າພະແນກ**

ປອ ຫູ້າສາຍ ນວນທາສິງ

<u>ບ່ອນສົ່ງ:</u>

- ຫ້ອງວ່າການນະຄອນຫຼວງວຽງຈັນ 01 ສະບັບ.
- ຄະນະພະແນກກະສິກຳ ແລະ ປ່າໄມ້.ນວ 01 ສະບັບ.
- ຫ້ອງການກະສິກຳ ແລະ ປ່າໄມ້ 9 ຕົວເມືອງໆລະ 01 ສະບັບ.
- ຂະແໜງລ້ຽງສັດ ແລະ ການປະມົງ ນວ 01 ສະບັບ.
- ຜູ້ປະກອບການລ້ຽງສັດ 01 ສະບັບ.
- ເກັບມ້ຽນສຳເນົາ 01 ສະບັບ.



Scanned with CamScanner